ລັດຄາລິຟໍເນຍ—ອົງການບໍລິການສຸຂະພາບ ແລະ ມະນຸດ
**ພະແນກພັດທະນາການບໍລິການ**
1215 O Street, Sacramento, CA 95814
www.dds.ca.gov

NANCY BARGMANN
*ຜູ້ອຳນວຍການ*

GAVIN NEWSOM
*ຜູ້ວ່າການລັດ*

ວັນທີ 22 ພະຈິກ 2023

ເຖິງ: ບັນດາຜູ້ອຳນວຍການສູນພາກພື້ນ

ເລື່ອງ: ໂຄງການກຳນົດດ້ວຍຕົນເອງ – ອັບເດດ ສິນຄ້າ ແລະ ການບໍລິການ

ເພື່ອໃຫ້ສອດຄ່ອງກັບຫຼັກການສຳຄັນຂອງໂຄງ ການກຳນົດໃຫ້ຕົນເອງ (SDP), ຜູ້ເຂົ້າຮ່ວມມີສິດອຳນາດໃນການຄວບຄຸມງົບປະມານສ່ວນບຸກຄົນ ເພື່ອຊື້ບໍລິການທີ່ຈຳເປັນ ແລະ ການສະໜັບສະໜູນຕ່າງໆ ເພື່ອໃຫ້ບັນລຸເປົ້າຫມາຍຂອງແຜນໂຄງການສ່ວນບຸກຄົນ (IPP) ຂອງຕົນ. ຈຸດປະສົງຂອງການຈົດໝາຍສະບັບນີ້ແມ່ນເພື່ອສະໜອງການປັບປຸງການຊີ້ນຳຂອງພະແນກຄັ້ງວັນທີ 13 ມັງກອນ 2022 ກ່ຽວກັບສິນຄ້າ ແລະ ການບໍລິການໃນ SDP ໂດຍການເພີ່ມການບໍລິການຄອບຄົວທີ່ປະສານງານ (CFS) ໃສ່ ເອກະສານຄັດຕິດ B ເປັນການບໍລິການທີ່ຈະໄດ້ຮັບທຶນນອກງົບປະມານຂອງຜູ້ເຂົ້າຮ່ວມ SDP. ດັ່ງນັ້ນ, ເອກະສານຄັດຕິດ B ແລະ ໂຄງການກຳນົດດ້ວຍຕົນເອງໃນການຄິດໄລ່ງົບປະມານສ່ວນບຸກຄົນ ແລະ ເຄື່ອງມືການຢັ້ງຢືນໄດ້ຖືກປັບປຸງແລ້ວ.

**ການຕັດສິນໃຈວ່າຈະລວມຄ່າໃຊ້ຈ່າຍໄວ້ໃນງົບປະມານ SDP ໄດ້ຫຼືບໍ່**

ກ່ອນທີ່ຈະລວມສິນຄ້າ ຫຼື ການບໍລິການໃດໆໄວ້ໃນງົບປະມານສ່ວນບຸກຄົນ ຫຼື ແຜນການໃຊ້ຈ່າຍຂອງ SDP, ທີມງານວາງແຜນຕ້ອງເຮັດໃຫ້ຈະແຈ້ງກ່ອນວ່າສິນຄ້າ ຫຼື ການບໍລິການນັ້ນຈະຕອບສະໜອງຄວາມຕ້ອງການ ຫຼື ເປົ້າໝາຍທີ່ໄດ້ລະບຸໄວ້ໃນ IPP ແນວໃດ. ເອກະສານຄັດຕິດ A ໃຫ້ລາຍລະອຽດຂໍ້ມູນກ່ຽວກັບວິທີການທີ່ຜູ້ເຂົ້າຮ່ວມ ແລະ ທີມງານ ວາງແຜນສາມາດກຳນົດໄດ້ວ່າສິນຄ້າ ຫຼື ການບໍລິການສາມາດຕອບສະໜອງຄວາມຕ້ອງການ ຫຼື ເປົ້າຫມາຍໃນ IPP ໄດ້ຫຼືບໍ່.

ດັ່ງທີ່ໄດ້ຮັບຮູ້ໃນຄຳສັ່ງຂອງພະແນກພັດທະນາການບໍລິການ ວັນທີ 11 ມັງກອນ 2019 ກ່ຽວກັບງົບປະມານສ່ວນບຸກຄົນ ແລະ ແຜນການໃຊ້ຈ່າຍ, ກອງທຶນ SDP ສາມາດໃຊ້ໄດ້ສະເພາະສິນຄ້າ ແລະ ການບໍລິການທີ່:

- ໄດ້ຮັບການອະນຸມັດຈາກສູນກາງລັດຖະບານກາງສຳລັບການບໍລິການ Medicare ແລະ Medicaid ແລະ
- ບໍ່ມີການສະໜອງຜ່ານແຫຼ່ງທຶນອື່ນໆ (ເຊັ່ນ: Medi-Cal, ການບໍລິການຊ່ວຍເຫຼືອໃນບ້ານ, ໂຮງຮຽນ ແລະ ອື່ນໆ).

ຢ່າງໃດກໍ່ຕາມ, ໃນບາງກໍລະນີຜູ້ບໍລິໂພກອາດ ຕ້ອງການສິນຄ້າ ແລະ ການບໍລິການເພີ່ມເຕີມນອກເໜືອຈາກສິ່ງທີ່ໄດ້ຮັບທຶນຈາກງົບປະມານສ່ວນບຸກຄົນເພື່ອສະໜັບສະໜູນ IPP ຂອງພວກເຂົາ. ເອກະສານຄັດຕິດ B ໃຫ້ຄຳແນະນຳກ່ຽວກັບສິນຄ້າ ແລະ

ການບໍລິການທີ່ສາມາດໄດ້ຮັບການສະໜອງທຶນຈາກງົບປະມານສ່ວນບຸກຄົນໃນແຜນການໃຊ້ຈ່າຍ, ເຊັ່ນດຽວກັນກັບສິ່ງທີ່ຈະໄດ້ຮັບຈາກການປະຕິບັດນອກງົບປະມານສ່ວນບຸກຄົນ.

**ການກຳນົດມອບໝາຍການບໍລິການ (ສິນຄ້າ ແລະ ການບໍລິການທີ່ໄດ້ໃຫ້ຄຳແນະນຳແກ່ຜູ້ເຂົ້າຮ່ວມ)**
SDP ອະນຸຍາດໃຫ້ສຳລັບປະເພດການບໍລິການທີ່ກຳນົດເປັນ "ສິນຄ້າ ແລະ ການບໍລິການທີ່ໄດ້ໃຫ້ຄຳແນະນຳແກ່ຜູ້ເຂົ້າຮ່ວມ." ເອກະສານຄັດຕິດ C ປະກອບມີແຜນຜັງສາຍການປະຕິບັດງານທີ່ມີຈຸດປະສົງຊ່ວຍໃຫ້ທີມງານວາງແຜນຕັດສິນໃຈໄດ້ວ່າເມື່ອໃດສິນຄ້າ ຫຼື ການບໍລິການ ສາມາດໄດ້ຮັບການສະໜັບສະໜູນທຶນໂດຍຜ່ານ ສິນຄ້າ ແລະ ການບໍລິການທີ່ໄດ້ໃຫ້ຄຳແນະນຳແກ່ຜູ້ເຂົ້າຮ່ວມ, ລະຫັດການບໍລິການ 333.

ຖ້າທ່ານມີຄຳຖາມກ່ຽວກັບແຈ້ງການສະບັບນີ້, ກະລຸນາຕິດຕໍ່ sdp@dds.ca.gov.

ດ້ວຍຄວາມເຄົາລົບ,

*ຕົ້ນສະບັບລົງນາມໂດຍ:*

ປອ. VICKI L. SMITH
ຮອງຜູ້ອຳນວຍການ
ຂະແໜງການພັດທະນານະໂຍບາຍ ແລະ ແຜນງານ

ເອກະສານຄັດຕິດ

ສຳເນົາເຖິງ: ບັນດາຜູ້ບໍລິຫານໃນສູນພາກພື້ນ
ບັນດາຜູ້ອຳນວຍການສູນພາກພື້ນຂອງການບໍລິການຜູ້ບໍລິໂພກ
ບັນດາຜູ້ອຳນວຍການຝ່າຍບໍລິການຊຸມຊົນຂອງສູນປພາກພື້ນ
ບັນດາສະມາຄົມໜ່ວຍງານຂອງສູນປະຈຳເຂດ
ສະພາແຫ່ງລັດວ່າດ້ວຍຄວາມພິການດ້ານພັດທະນາການ
Nancy Bargmann, ພະແນກພັດທະນາການບໍລິການ
Brian Winfield, ພະແນກບໍລິດ້ານການພັດທະນາ
Carla Castañeda, ພະແນກບໍລິການພັດທະນາ
Jim Knight, ພະແນກບໍລິການດ້ານການພັດທະນາ
Ernie Cruz, ພະແນກບໍລິການດ້ານການພັດທະນາ
Suzy Requarth, ພະແນກບໍລິການດ້ານການພັດທະນາ
Kathleen Dempsey, ພະແນກບໍລິການດ້ານການພັດທະນາ